ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

PCD

ເລກທີ 453 /ພກພ

ນະຄອນຫລວງວຽງຈັນ, ວັນທີ 12 NOV 2025

ຮຽນ: ທ່ານຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ)
: ທ່ານຜູ້ອໍານວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ VI ປີ 2025 (BOD VI)

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ສຄຄຊ ເລກທີ: 27/ຄຄຊ, ລົງວັນທີ: 29/03/2022
- ອີງຕາມ: ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວສະບັບເລກທີ: 008/ຕລຊລ, ລົງວັນທີ: 27/09/2018

ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ VI ປີ 2025 ເຊິ່ງໄດ້ຈັດຂຶ້ນໃນວັນທີ: 12/11/2025 ເວລາ 10:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມ ຄອນຕິເນັນໂທ ພລາຊາ ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ ສີທອງ ພິມມະຈິດ ປະທານສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ພ້ອມດ້ວຍຜູ້ເຂົ້າຮ່ວມ 7 ທ່ານ ດັ່ງນີ້:

1. ທ່ານ ສີທອງ ພິມມະຈິດ ປະທານສະພາບໍລິຫານ
2. ທ່ານ ສີທາ ພິມມະຈິດ ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ ສະມາຊິກສະພາບໍລິຫານ/ຜູ້ອໍານວຍການໃຫຍ່ PCD
4. ທ່ານ ນັນທະລັດ ທິລະກຸນ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ
5. ທ່ານ ນາງໄຮທອງ ພິມມະຈິດ ສະມາຊິກສະພາບໍລິຫານ/ຮອງຜູ້ອໍານວຍການໃຫຍ່ຝ່າຍບັນຊີ-ການເງິນ,
6. ທ່ານ ພູມສະຫວັນ ສຸນັນທອງ ສະມາຊິກສະພາບໍລິຫານ/ຮອງຜູ້ອໍານວຍການຝ່າຍພັດທະນາທຸລະກິດ
7. ທ່ານ ພຸດທະເສນ ພິມມິໄຊ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີເປັນເອກະພາບກັນ ດັ່ງນີ້:

1. ເຫັນດີຮັບຮອງເອົາບົດລາຍງານການດໍາເນີນທຸລະກິດ ປະຈໍາໄຕມາດ 3 ປີ 2025.
2. ເຫັນດີຮັບຮອງເອົາບົດລາຍງານ ການເງິນ ປະຈໍາໄຕມາດ 3 ປີ 2025 ເຊິ່ງຜູ້ກວດສອບບັນຊີພາຍໃນໄດ້ທົບທວນແລ້ວ.

ກອງປະຊຸມໄດ້ອັດລົງໃນເວລາ 10:45 ໂມງ ຂອງວັນທີ: 12/11/2025.

ປະທານສະພາບໍລິຫານ

ປອ. ສີທອງ ພິມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທ ພລາຊາວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.
Tel: (856-21) 229696, Fax: (856-21)265394; E-mail: info@pcdlao.com; website: www.pcdlao.com